ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000====-----

ຄະນະກຳມະການຄຸ້ມຄອງ ເລກທີ 006 /ຄລຕ

ຫຼັກຊັບ ແລະ ຕະຫຼາດຫຼັກຊັບ ນະຄອນຫຼວງວຽງຈັນ, ວັນທີ 08 ກໍລະກົດ 2010

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ

---

- ອີງຕາມດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ ລົງວັນທີ 24 ພຶດສະພາ 2010;
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 051/ນຍ ລົງວັນທີ 25 ພຶດສະພາ 2009.

## ປະທານຄະນະກຳມະການ ຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ອອກຂໍ້ຕົກລົງ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເພື່ອຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນຂອງ ສປປ ລາວ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຂຽນຫຍໍ້ເປັນພາສາລາວວ່າ "ສຄລຕ" ແລະ ຊື່ເປັນພາສາອັງກິດແມ່ນ Securities and Exchange Commission Office ຂຽນຫຍໍ້ເປັນພາສາອັງກິດວ່າ "SECO". ສຳນັກງານ ຄລຕ ແມ່ນການຈັດຕັ້ງໜຶ່ງ ທີ່ມີຖານະທຽບເທົ່າກົມຂຶ້ນກັບ ທະນາຄານແຫ່ງ ສປປ ລາວ ທາງດ້ານການເມືອງແນວຄິດ, ການຈັດຕັ້ງ, ບຸກຄະລາກອນ ແລະ ງົບປະມານ; ສ່ວນການເຄື່ອນໄຫວດ້ານວິຊາການແມ່ນຢູ່ພາຍໃຕ້ການຊີ້ນຳຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ. ສຳນັກງານ ຄລຕ ມີພາລະບົດບາດເປັນເສນາທິການໃຫ້ ຄລຕ ໃນວຽກງານການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃຫ້ມີການພັດທະນາໂດຍສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານວາງອອກໃນແຕ່ລະໄລຍະ.

## ໝວດທີ II
## ສິດ ແລະ ໜ້າທີ່ຂອງສຳນັກງານ ຄລຕ

**ມາດຕາ 3. ສິດຂອງສຳນັກງານ ຄລຕ**

ສຳນັກງານ ຄລຕ ມີສິດ ດັ່ງນີ້:

1. ອອກບົດແນະນຳ ແລະ ແຈ້ງການໃນການຈັດຕັ້ງປະຕິບັດລະບຽບ ແລະ ຂໍ້ກຳນົດຕ່າງໆ ທີ່ພົວພັນເຖິງການຄຸ້ມຄອງຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ບໍລິສັດອອກຫຼັກຊັບ, ບໍລິສັດທີ່ປຶກສາບັນຊີ, ບໍລິສັດກວດສອບພາຍນອກກ່ຽວກັບວຽກງານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ;
2. ອອກ, ໂຈະ ແລະ ຖອນໃບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ, ໃບອະນຸຍາດອອກຫຼັກຊັບ, ໃບອະນຸຍາດໃຫ້ແກ່ບໍລິສັດທີ່ປຶກສາບັນຊີ ແລະ ບໍລິສັດກວດສອບພາຍນອກ ທີ່ໃຫ້ບໍລິການແກ່ທຸລະກິດຫຼັກຊັບ, ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຕາມການເຫັນດີຂອງ ຄລຕ;
3. ຄົ້ນຄ້ວາການສັ່ງໂຈະການເຄື່ອນໄຫວຊື້-ຂາຍ, ການຊຳລະສະສາງ ຫຼື ບາງລາຍການເຄື່ ອນໄຫວຂອງຕະຫຼາດຫຼັກຊັບ ເມື່ອເຫັນວ່າມີຄວາມຈຳເປັນ ແລະ ນຳສະເໜີຕໍ່ ຄລຕ ເພື່ອພິຈາລະນາ;
4. ລົງກວດກາຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ບໍລິສັດອອກຫຼັກຊັບ ຕາມແຜນການປະຈຳປີ ແລະ ກວດກາສຸກເສີນ ຕາມຄວາມຈຳເປັນ;
5. ຮຽກເອົາຂໍ້ມູນເພື່ອຈຸດປະສົງຕິດຕາມກວດກາການເຄື່ອນໄຫວທຸລະກິດຂອງຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ບໍລິສັດອອກຫຼັກຊັບ ໄດ້ທຸກເວລາເມື່ອເຫັນວ່າມີຄວາມຈຳເປັນ;
6. ສະເໜີຍ້ອງຍໍບຸກຄົນ ແລະ ນິຕິບຸກຄົນທີ່ມີຜົນງານໃນການປະກອບສ່ວນເຄື່ອນໄຫວວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ;

7. ສະເໜີຕໍ່ພາກສ່ວນກ່ຽວຂ້ອງປະຕິບັດວິໄນ, ປັບໃໝ ແລະ ດຳເນີນມາດຕະການຕໍ່ບຸກຄົນ ແລະ ນິຕິບຸກຄົນທີ່ລະເມີດຂໍ້ກຳນົດກົດລະບຽບຕ່າງໆກ່ຽວກັບຫຼັກຊັບ ແລະ ຕະຫຼາດຫຼັກຊັບ ແລະ ດຳເນີນຄະດີຕາມລະບຽບກົດໝາຍຂອງ ສປປ ລາວ;
8. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສົ່ງເສີມການເຄື່ອນໄຫວທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃຫ້ມີປະສິດທິພາບ ແລະ ເພື່ອໄກ່ເກ່ຍຂໍ້ຂັດແຍ່ງ, ຕ້ານ ແລະ ສະກັດກັ້ນການເຄື່ອນໄຫວທີ່ກ່ຽວຂ້ອງກັບຫຼັກຊັບ ທີ່ມີລັກສະນະສໍ້ໂກງ ຫຼື ບໍ່ ຖືກຕ້ອງຕາມກົດໝາຍ;
9. ສົມທົບກັບພາກສ່ວນກ່ຽວຂ້ອງຈັດສຳມະນາ, ເປີດກອງປະຊຸມ ແລະ ໂຄສະນາເຜີຍແຜ່ຄວາມຮູ້ຄວາມເຂົ້າໃຈທາງດ້ານທິດສະດີ, ພາກປະຕິບັດ ແລະ ລະບຽບກົດໝາຍຕ່າງໆ ກ່ຽວກັບການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
10. ເຂົ້າຮ່ວມກອງປະຊຸມ ແລະ ປະກອບຄວາມເຫັນຕໍ່ວຽກງານທີ່ພົວພັນເຖິງການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ພົວພັນແລກປ່ຽນບົດຮຽນກ່ຽວກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດຂອງ ຄລຕ;
11. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງ ຄລຕ.

**ມາດຕາ 4. ໜ້າທີ່ຂອງສຳນັກງານ ຄລຕ**

ສຳນັກງານ ຄລຕ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດ, ນະໂຍບາຍ ແລະ ມະຕິຂອງ ຄລຕ ກ່ຽວກັບການພັດທະນາວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃຫ້ມີຄວາມໂປ່ງໃສ, ຍຸຕິທຳ ແລະ ໃຫ້ມີການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຄົ້ນຄວ້າລະບຽບການຕ່າງໆ ທີ່ຈຳເປັນເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຂອງສຳນັກງານ ຄລຕ ແລະ ສະເໜີຕໍ່ ຄລຕ ພິຈາລະນາຮັບຮອງ;
3. ສ້າງແຜນການເຄື່ອນໄຫວ ແລະ ງົບປະມານປະຈຳປີ ເພື່ອນຳສະເໜີຕໍ່ ຄລຕ ພິຈາລະນາຮັບຮອງ;
4. ຄົ້ນຄ້ວາການສະເໜີຂໍອອກ ແລະ ຂາຍຫຼັກຊັບ, ການຂໍສ້າງຕັ້ງບໍລິສັດຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເພື່ອສະໜີຕໍ່ ຄລຕ ພິຈາລະນາ;
5. ຄຸ້ມຄອງການອອກ ແລະ ການສະເໜີຂາຍຫຼັກຊັບຕໍ່ມວນຊົນ, ການເຄື່ອນໄຫວຂອງບໍລິສັດອອກຫຼັກຊັບ, ບໍລິສັດຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃຫ້ມີຄວາມໝັ້ນຄົງ, ຄວາມໂປ່ງໃສ ແລະ ຍຸຕິທຳ;
6. ຈັດຕັ້ງການສອບເສັງ ແລະ ຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ;
7. ເກັບກຳສັງລວມສະຖິຕິກ່ຽວກັບການເຄື່ອນໄຫວວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພ້ອມທັງປະຕິບັດລະບອບລາຍງານໃຫ້ ຄລຕ ຢ່າງເປັນປົກກະຕິ;
8. ຄົ້ນຄ້ວາໄກ່ເກ່ຍຂໍ້ຂັດແຍ່ງກ່ຽວກັບຫຼັກຊັບ ເພື່ອສະເໜີຕໍ່ ຄລຕ ກ່ຽວ ກັບມາດຕະການແກ້ໄຂ ແລະ ການປະຕິບັດມາດຕະການຕໍ່ຜູ້ລະເມີດຕາມລະບຽບການທີ່ກ່ຽວຂ້ອງ;

9. ໂຄສະນາເຜີຍແຜ່ ແລະ ຝຶກອົບຮົມກ່ຽວກັບວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃຫ້ແກ່ພະນັກງານຂອງສຳນັກງານ ຄລຕ ແລະ ຜູ້ກ່ຽວຂ້ອງກັບການດຳເນີນທຸລະກິດຫຼັກຊັບ;
10. ພົວພັນ, ປະສານງານ ແລະ ຮ່ວມມືກັບຕ່າງປະເທດ ຕາມການເຫັນດີຈາກ ຄລຕ;
11. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງ ຄລຕ.

## ໝວດທີ III
## ໂຄງປະກອບດ້ານການຈັດຕັ້ງ

### ມາດຕາ 5. ໂຄງປະກອບດ້ານກົງຈັກ

ໂຄງປະກອບດ້ານກົງຈັກຂອງສຳນັກງານ ຄລຕ ປະກອບມີບັນດາພະແນກ ດັ່ງນີ້:

1. ພະແນກບໍລິຫານ;
2. ພະແນກນິຕິກຳ;
3. ພະແນກຄຸ້ມຄອງການອອກຫຼັກຊັບ;
4. ພະແນກຄຸ້ມຄອງທຸລະກິດຫຼັກຊັບ;
5. ພະແນກຄຸ້ມຄອງ ແລະ ພັດທະນາຕະຫຼາດຫຼັກຊັບ.

### ມາດຕາ 6. ໂຄງປະກອບດ້ານບຸກຄະລາກອນ

ສຳນັກງານ ຄລຕ ປະກອບດ້ວຍບຸກຄະລາກອນດັ່ງນີ້: ຫົວໜ້າສຳນັກງານ ຄລຕ ທັງເປັນເລຂາທິການ ຄລຕ, ຮອງຫົວໜ້າສຳນັກງານ ຄລຕ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ພະນັກງານວິຊາການຈຳນວນໜຶ່ງ ທີ່ໄດ້ຮັບການແຕ່ງຕັ້ງບັນຈຸຊັບຊ້ອນເຂົ້າໃນຕຳແໜ່ງງານຕ່າງໆ ທີ່ໄດ້ກຳນົດໃນລະບຽບລັດຖະກອນ.

ພະນັກງານຂອງສຳນັກງານ ຄລຕ ທີ່ໄດ້ຮັບການແຕ່ງຕັ້ງບັນຈຸຊັບຊ້ອນເຂົ້າໃນຕຳແໜ່ງງານຕ່າງໆ ຕ້ອງປະຕິບັດຕາມລະບຽບຄຸ້ມຄອງລັດຖະກອນຢ່າງເຄັ່ງຄັດ.

ພະນັກງານຂອງສຳນັກງານ ຄລຕ ຕ້ອງມີຈັນຍາບັນ, ຄວາມຮູ້ຄວາມສາມາດທາງດ້ານວິຊາການໃນລະດັບທີ່ແນ່ນອນ ແລະ ມີຄວາມຮັບຜິດຊອບຕໍ່ກັບການເຄື່ອນໄຫວວຽກງານຂອງຕົນ.

## ໝວດທີ IV
## ໜ້າທີ່ຂອງແຕ່ລະພະແນກ

### ມາດຕາ 7. ພະແນກບໍລິຫານ

ພະແນກບໍລິຫານ ມີໜ້າທີ່ ດັ່ງນີ້:

1. ສ້າງແຜນການເຄື່ອນໄຫວ ແລະ ງົບປະມານປະຈຳປີຂອງສຳນັກງານ ຄລຕ ເພື່ອສະເໜີຕໍ່ ຄລຕ ພິຈາລະນາຮັບຮອງ;

2. ສະຫຼຸບ ແລະ ສ້າງແຜນການເຄື່ອນໄຫວວຽກງານຂອງສຳນັກງານ ຄລຕ ປະຈຳອາ ທິດ, ເດືອນ, ໄຕມາດ, 6 ເດືອນ ແລະ 1 ປີ;
3. ປະຕິບັດວຽກງານບໍລິຫານພາຍໃນສຳນັກງານ ຄລຕ;
4. ຈັດຕັ້ງປະຕິບັດວຽກງານການເງິນພາຍໃນສຳນັກງານ ຄລຕ ເຊັ່ນ: ສັງລວມລາຍຮັບ, ຂຶ້ນແຜນ ແລະ ຄຸ້ມຄອງລາຍຈ່າຍ ແລະ ສະຫຼຸບລາຍຮັບ-ລາຍຈ່າຍ;
5. ສ້າງແຜນການ ແລະ ຈັດຕັ້ງປະຕິບັດໂຄງການຝຶກອົບຮົມ ແລະ ການໂຄສະນາເຜີຍແຜ່ກ່ຽວກັບວຽກງານຫຼັກຊັບ;
6. ສ້າງລະບົບໄອທີ ສຳລັບກາ ນເຄື່ອນໄຫວວຽກງານຂອງສຳນັກງານ ຄລຕ ແລະ ລະບົບເຜີຍແຜ່ຂໍ້ມູນຂ່າວສານແກ່ມວນຊົນ; ຂຶ້ນແຜນຄວາມຕ້ອງການ ແລະ ຄຸ້ມຄອງການນຳໃຊ້ຮາດແວ ແລະ ຊອບແວ ທີ່ຈຳເປັນເພື່ອຮັບໃຊ້ພາຍໃນສຳນັກງານ ຄລຕ;
7. ຄົ້ນຄ້ວາ ແລະ ສ້າງແຜນຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ເພື່ອສະເໜີ ຄລຕ ພິຈາລະນາ ແລະ ຈັດຕັ້ງປະຕິບັດແຜນການດັ່ງກ່າວ;
8. ສ້າງລະບົບ, ກົນໄກ ແລະ ຈັດຕັ້ງປະຕິບັດການກວດກາພາຍໃນຢ່າງເຂັ້ມງວດ;
9. ປະສານສົມທົບ ແລະ ພົວພັນກັບພາກສ່ວນກ່ຽວຂ້ອງພາຍໃນ ແລະ ນອກສຳນັກງານ ຄລຕ ຕາມສິດ ແລະ ໜ້າທີ່ຂອງພະແນກຕົນ;
10. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສຳນັກງານ ຄລຕ.

**ມາດຕາ 8. ພະແນກນິຕິກຳ**

ພະແນກນິຕິກຳ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາຮ່າງ ແລະ ປັບປຸງລະບຽບການ, ຂໍ້ຕົກລົງ, ແຈ້ງການ ແລະ ບົດແນະນຳກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງໃນວຽກງານຫຼັກຊັບ;
2. ປະສານສົມທົບກັບພະແນກອື່ນໆ ພາຍໃນສຳນັກງານ ຄລຕ ໃຫ້ຄຳແນະນຳ, ຄົ້ນຄ້ວາ, ຮ່າງ ແລະ ປັບປຸງລະບຽບການ, ຂໍ້ຕົກລົງ, ແຈ້ງການ ແລະ ຂໍ້ແນະນຳ;
3. ປະຕິບັດມາດຕະການຕໍ່ຜູ້ລະເມີດລະບຽບການກ່ຽວກັບຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຕາມລະບຽບກົດໝາຍວາງອອກ ຫຼື ຕາມການຕົກລົງຂອງ ຄລຕ;
4. ດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງກ່ຽວກັບຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຕາມຂອບເຂດສິດຂອງຕົນ;
5. ປະສານສົມທົບ ແລະ ພົວພັນກັບພາກສ່ວນກ່ຽວຂ້ອງພາຍໃນ ແລະ ນອກສຳນັກງານ ຄລ ຕ ຕາມສິດ ແລະ ໜ້າທີ່ຂອງພະແນກຕົນ;
6. ສະຫຼຸບ ແລະ ສ້າງແຜນການເຄື່ອນໄຫວວຽກງານຂອງພະແນກຕົນໃນແຕ່ລະໄລຍະ;
7. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສຳນັກງານ ຄລຕ.

**ມາດຕາ 9. ພະແນກຄຸ້ມຄອງການອອກຫຼັກຊັບ**

ພະແນກຄຸ້ມຄອງການອອກຫຼັກຊັບ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາຮ່າງ ແລະ ປັບປຸງລະບຽບການ, ຂໍ້ຕົກລົງ, ແຈ້ງການ ແລະ ບົດແນະນຳກ່ຽວກັບການອອກ ແລະ ການສະເໜີຂາຍຫຼັກຊັບຕໍ່ມວນຊົນ ແລະ ຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຫຼັກຊັບ;
2. ຄົ້ນຄ້ວາ ແລະ ຮ່າງລະບຽບການ ແລະ ບົດແນະນຳ ກ່ຽວກັບການຄຸ້ມຄອງບໍລິສັດທີ່ປຶກສາບັນຊີ ແລະ ບໍລິສັດກວດສອບພາຍນອກ ທີ່ຕິດພັນກັບວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
3. ຄົ້ນຄ້ວາການສະເໜີຂໍອອກ ແລະ ຂາຍຫຼັກຊັບຕໍ່ມວນຊົນ ແລະ ຕິດຕາມການປະຕິບັດ;
4. ຄົ້ນຄ້ວາການສະເໜີຂໍເປັນບໍລິສັດທີ່ປຶກສາບັນຊີ ແລະ ບໍລິສັດກວດສອບພາຍນອກກ່ຽວກັບວຽກງານຫຼັກຊັບ;
5. ຄຸ້ມຄອງ, ຕິດຕາມ ແລະ ກວດກາບໍລິສັດອອກຫຼັກຊັບ, ບໍລິສັດທີ່ປຶກສາບັນຊີ ແລະ ບໍລິສັດກວດສອບພາຍນອກ;
6. ຄົ້ນຄ້ວາການສັ່ງໂຈະ ຫຼື ຖອນໃບອະນຸຍາດຂອງບໍລິ ສັດອອກຫຼັກຊັບ, ບໍລິສັດທີ່ປຶກສາບັນຊີ ແລະ ບໍລິສັດກວດສອບພາຍນອກ;
7. ໃຫ້ຄຳແນະນຳແກ່ບໍລິສັດອອກຫຼັກຊັບ, ບໍລິສັດທີ່ປຶກສາບັນຊີ ແລະ ບໍລິສັດກວດສອບພາຍນອກ;
8. ສັງລວມຂໍ້ມູນ ແລະ ວິເຄາະການເຄື່ອນໄຫວຂອງບໍລິສັດອອກຫຼັກຊັບ, ບໍລິສັດທີ່ປຶກສາບັນຊີ ແລະ ບໍລິສັດກວດສອບພາຍນອກ;
9. ປະສານສົມທົບ ແລະ ພົວພັນກັບພາກສ່ວນກ່ຽວຂ້ອງພາຍໃນ ແລະ ນອກສຳນັກງານ ຄລຕ ຕາມສິດ ແລະ ໜ້າທີ່ຂອງພະແນກຕົນ;
10. ສະຫຼຸບ ແລະ ສ້າງແຜນການເຄື່ອນໄຫວວຽກງານຂອງພະແນກຕົນໃນແຕ່ລະໄລຍະ;
11. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສຳນັກງານ ຄລຕ.

**ມາດຕາ 10. ພະແນກຄຸ້ມຄອງທຸລະກິດຫຼັກຊັບ**

ພະແນກຄຸ້ມຄອງທຸລະກິດຫຼັກຊັບ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ຮ່າງ ແລະ ປັບປຸງລະບຽບການ, ຂໍ້ຕົກລົງ, ແຈ້ງການ ແລະ ບົດແນະນຳກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ;
2. ຄົ້ນຄ້ວາການສະເໜີຂໍອະນຸມັດ, ໂຈະ ຫຼື ຖອນໃບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ;
3. ຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວຂອງບໍລິສັດຫຼັກຊັບ;
4. ກວດກາກັບທີ່ ແລະ ກວດກາທາງເອກະສານຂອງບໍລິສັດຫຼັກຊັບ;
5. ກຳນົດມາດຕະຖານ ແລະ ກວດກາທາງ ດ້ານເຕັກນິກລະບົບຊອບແວ ແລະ ຮາ ດແວຂອງບໍລິສັດຫຼັກຊັບ;
6. ຈັດຕັ້ງການສອບເສັງ, ອອກໃບຢັ້ງຢືນ ແລະ ຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ;

7. ສັງລວມຂໍ້ມູນ ແລະ ວິເຄາະການເຄື່ອນໄຫວຂອງທຸລະກິດຫຼັກຊັບ;
8. ປະສານສົມທົບ ແລະ ພົວພັນກັບພາກສ່ວນກ່ຽວຂ້ອງພາຍໃນ ແລະ ນອກສຳນັກງານ ຄລຕ ຕາມສິດ ແລະ ໜ້າທີ່ຂອງພະແນກຕົນ;
9. ສະຫຼຸບ ແລະ ສ້າງແຜນການເຄື່ອນໄຫວວຽກງານຂອງພະແນກຕົນໃນແຕ່ລະໄລຍະ;
10. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສຳນັກງານ ຄລຕ.

## ມາດຕາ 11. ພະແນກຄຸ້ມຄອງ ແລະ ພັດທະນາຕະຫຼາດຫຼັກຊັບ

ພະແນກຄຸ້ມຄອງ ແລະ ພັດທະນາຕະຫຼາດຫຼັກຊັບ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ຮ່າງ ແລະ ປັບປຸງລະບຽບການ, ຂໍ້ຕົກລົງ, ແຈ້ງການ ແລະ ບົດແນະນຳກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕະຫຼາດຫຼັກຊັບ;
2. ຄົ້ນຄ້ວາການສະເໜີຂໍສ້າງຕັ້ງຕະຫຼາດຫຼັກຊັບ;
3. ຄົ້ນຄ້ວາຮ່າງລະບຽບການ ແລະ ແຜນການເຄື່ອນໄຫວຂອງຕະຫຼາດຫຼັກຊັບ ຕາມການສະເໜີຂອງຕະຫຼາດຫຼັກຊັບ ເພື່ອສະເໜີຕໍ່ຫົວໜ້າສຳນັກງານ ຄລຕ ພິຈາລະນາ;
4. ກຳນົດມາດຕະຖານ ແລະ ກວດກາທາງດ້ານເຕັກນິກລະບົບຊອບແວ ແລະ ຮາດແວ ຂອງຕະຫຼາດຫຼັກຊັບ;
5. ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງຕະຫຼາດຫຼັກຊັບ ໃຫ້ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ;
6. ພິຈາລະນາ ແລະ ສະເໜີສັ່ງໂຈະການເຄື່ອນໄຫວຊື້-ຂາຍ, ການຊຳລະສະສາງ ຫຼື ບາງລາຍການເຄື່ອນໄຫວຂອງຕະຫຼາດຫຼັກຊັບ ເມື່ອເຫັນວ່າມີຄວາມຈຳເປັນ;
7. ຄົ້ນຄ້ວາ ແລະ ຮ່າງແຜນຍຸດທະສາດໃນການພັດທະນາຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
8. ສັງລວມຂໍ້ມູນ ແລະ ວິເຄາະການເຄື່ອນໄຫວຂອງຕະຫຼາດຫຼັກຊັບ;
9. ປະສານສົມທົບ ແລະ ພົວພັນກັບພາກສ່ວນກ່ຽວຂ້ອງພາຍໃນ ແລະ ນອກສຳນັກງານ ຄລຕ ຕາມສິດ ແລະ ໜ້າທີ່ຂອງພະແນກຕົນ;
10. ສະຫຼຸບ ແລະ ສ້າງແຜນການເຄື່ອນໄຫວວຽກງານຂອງພະແນກຕົນໃນແຕ່ລະໄລຍະ;
11. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສຳນັກງານ ຄລຕ.

# ໝວດທີ V
# ລະບອບແບບແຜນວິທີເຮັດວຽກ

## ມາດຕາ 12. ແບບແຜນວິທີເຮັດວຽກ

ສຳນັກງານ ຄລຕ ມີແບບແຜນວິທີການເຮັດວຽກ ດັ່ງນີ້:

1. ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລື ແລະ ຕົກລົງວຽກເປັນໝູ່ຄະນະ, ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະຄົນຢ່າງຈະແຈ້ງ, ມີແຜນການຈັດຕັ້ງປະຕິບັດ ແລະ ດຳເນີນການກວດກາໃນແຕ່ລະໄລຍະ;

2. ການເຄື່ອນໄຫວດ້ານວິຊາການ ແມ່ນຢູ່ພາຍໃຕ້ການຊີ້ນຳຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ; ສ່ວນການເຄື່ອນໄຫວດ້ານການເມືອງ-ແນວຄິດ ແລະ ອົງການຈັດຕັ້ງມະຫາຊົນ ແມ່ນຂຶ້ນກັບທະນາຄານແຫ່ງ ສປປ ລາວ;
3. ມີລະບົບການຕິດຕາມ, ກວດກາ, ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດວຽກງານຢ່າງເປັນປົກກະຕິ ເພື່ອຊອກໃຫ້ເຫັນດ້ານຕັ້ງໜ້າ, ເພື່ອສົ່ງເສີມ ແລະ ແກ້ໄຂດ້ານອ່ອນທີ່ຄົງຄ້າງ;
4. ປະຕິບັດລະບອບການສ່ອງແສງລາຍງານ ແລະ ມີແຜນວຽກປະຈຳອາທິດ, ເດືອນ, ໄຕມາດ, 6 ເດືອນ ແລະ 1 ປີ;
5. ປະຕິບັດລະບອບການຮ່ວມຊີວິດການເມືອງຢູ່ພາຍໃນ ສຳນັກງານ ຄລຕ ຢ່າງເປັນປົກກະຕິ.

## ມາດຕາ 13. ງົບປະມານ

ທະນາຄານແຫ່ງ ສປປ ລາວ ເປັນຜູ້ສະໜອງງົບປະມານໃຫ້ແກ່ສຳນັກງານ ຄລຕ ນຳໃຊ້ເພື່ອເຄື່ອນໄຫວວຽກງານ, ປະກອບວັດຖຸເຕັກນິກ, ກໍ່ສ້າງພື້ນຖານໂຄງລ່າງ ແລະ ບຳລຸງກໍ່ສ້າງບຸກຄະລາກອນ.

ກໍລະນີ ສຳນັກງານ ຄລຕ ມີຄວາມຈຳເປັນນຳໃຊ້ງົບປະມານເກີນຄວາມສາມາດທີ່ທະນາຄານແຫ່ງ ສປປ ລາວ ສະໜອງໃຫ້, ກະຊວງການເງິນ ຕ້ອງຮັບຜິດຊອບ ສ່ວນທີ່ຜິດດ່ຽງດັ່ງກ່າວ.

ລາຍຮັບຕ່າງໆຂອງສຳນັກງານ ຄລຕ ໃຫ້ເອົາເຂົ້າລາຍຮັບຂອງທະນາຄານແຫ່ງ ສປປ ລາວ.

## ມາດຕາ 14. ກາໝາຍ

ກາໝາຍຂອງສຳນັກງານ ຄລຕ ແມ່ນເປັນຮູບຕົວອັກສອນສາກົນໂຕ " L " ມີເມັດ ຢູ່ລະຫວ່າງກາງຂອງຂອດລຸ່ມ ແລະ ຂອດເທິງ ແລະ ເປັນສີຄຳທັງໝົດ ຕາມດ້ວຍຕົວອັກສອນ " a " ເປັນສີແດງ ແລະ " o " ເປັນສີຟ້າ ຊຶ່ງສາມາດອ່ານອອກສຽງເປັນ "Lao", ແລະ ມີຕົວໜັງສືຢູ່ຂ້າງລຸ່ມເປັນພາສາລາວຂຽນວ່າ "ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ" ແລະ ເປັນພາສາອັງກິດຂຽນວ່າ " Lao Securities and Exchange Commission" ຊຶ່ງມີຄວາມໝາຍວ່າ ອົງກອນມະຫາພາກຄຸ້ມຄອງອົງກອນຈຸລະພາກ ທີ່ຂຶ້ນກັບຕົນ.

## ມາດຕາ 15. ຕາປະທັບ

ສຳນັກງານ ຄລຕ ມີຕາປະທັບຂອງຕົນເອງ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານທາງລັດຖະການ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 16. ການຈັດຕັ້ງປະຕິບັດ**

ມອບໃຫ້ສຳນັກງານ ຄລຕ , ຫ້ອງການ, ກົມຈັດຕັ້ງ ແລະ ພະນັກງານ , ບັນດາກົມ ແລະ ຫງບເທົ່າຂອງທະນາຄານ ແຫ່ງ ສປປ ລາວ ພ້ອມດ້ວຍພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 17. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມະການ**
**ຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ**

ເຊັນຮັບຮອງແລ້ວ

**ສົມສະຫວາດ ເລັ່ງສະຫວັດ**

# ສາລະບານ


**ໝວດທີ I ບົດບັນຍັດທົ່ວໄປ**......................................................................................1

ມາດຕາ 1. ຈຸດປະສົງ ...................................................................................... 1

ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ ........................................................................ 2

**ໝວດທີ II ສິດ ແລະ ໜ້າທີ່ຂອງສຳນັກງານ ຄລຕ**...........................................................2

ມາດຕາ 3. ສິດຂອງສຳນັກງານ ຄລຕ ........................................................................ 2

ມາດຕາ 4. ໜ້າທີ່ຂອງສຳນັກງານ ຄລຕ ...................................................................... 3

**ໂຄງປະກອບດ້ານການຈັດຕັ້ງ ໝວດທີ III**.................................................................4

ມາດຕາ 5. ໂຄງປະກອບດ້ານກົງຈັກ ......................................................................... 4

ມາດຕາ 6. ໂຄງປະກອບດ້ານບຸກຄະລາກອນ ................................................................ 4

**ໝວດທີ IV ໜ້າທີ່ຂອງແຕ່ລະພະແນກ**......................................................................4

ມາດຕາ 7. ພະແນກບໍລິຫານ ................................................................................. 4

ມາດຕາ 8. ພະແນກນິຕິກຳ ................................................................................... 5

ມາດຕາ 9. ພະແນກຄຸ້ມຄອງການອອກຫຼັກຊັບ ............................................................. 6

ມາດຕາ 10. ພະແນກຄຸ້ມຄອງທຸລະກິດຫຼັກຊັບ ............................................................. 6

ມາດຕາ 11. ພະແນກຄຸ້ມຄອງ ແລະ ພັດທະນາຕະຫຼາດຫຼັກຊັບ ........................................... 7

**ໝວດທີ V ລະບອບແບບແຜນວິທີເຮັດວຽກ**...................................................................7

ມາດຕາ 12. ແບບແຜນວິທີເຮັດວຽກ ........................................................................ 7

ມາດຕາ 13. ງົບປະມານ ....................................................................................... 8

ມາດຕາ 14. ການໝາຍ ........................................................................................ 8

ມາດຕາ 15. ຕາປະທັບ ....................................................................................... 8

**ໝວດທີ VI ບົດບັນຍັດສຸດທ້າຍ**................................................................................9

ມາດຕາ 16. ການຈັດຕັ້ງປະຕິບັດ ............................................................................ 9

ມາດຕາ 17. ຜົນສັກສິດ ...................................................................................... 9